# ກອງທຶນຂະໜາດນ້ອຍ ແລະ ເງື່ອນໄຂໃນການສະໝັກຂໍທຶນ

# Local Small Grand Fund (SGF)

1. **ຄວາມເປັນມາ:**

ສູນອົບຮົມຮ່ວມພັດທະນາ (PADETC) ໄດ້ຮັບທຶນເພື່ອການພັດທະນາ ຈາກອົງການ OXFAM NOVIB ຈຳນວນ 90,000 US$ (ເກົ້າສິບພັນໂດລາສະຫະລັດ) ເພື່ອເປັນກອງທຶນສົ່ງເສີມໃຫ້ແກ່ ບັນດາ ສະມາຄົມ ແລະ ອົງການຈັດຕັ້ງທາງສັງຄົມ ທີ່ບໍ່ຫວັງຜົນກຳໄລ ທີ່ມີຄວາມສົນໃຈ ສະໝັກຂໍທຶນ *(ມູນຄ່າຂອງທຶນສູງສຸດ USD 10,000 ໄລຍະດຳເນີນໂຄງການ ນຶ່ງປີ)* ເພື່ອຈັດຕັ້ງປະຕິບັດ ໂຄງການ *ການພັດທະນາ ແລະ ສົ່ງເສີມ ການສຶກສາເພື່ອການພັດທະນາແບບຍືນຍົງ, ກະສິກຳປອດສານພິດ, ວຽກງານພັດທະນາບົດບາດຍິງ-ຊາຍ ແລະ ການພັດທະນາໄວໜຸ່ມ.*

2. **ຈຸດປະສົງ:**

ເພື່ອສ້າງໂອກາດໃຫ້ ບັນດາສະມາຄົມ ແລະ ອົງການຈັດຕັ້ງທາງສັງຄົມ ທີ່ບໍ່ຫວັງຜົນກຳໄລ ໄດ້ມີໂອກາດພັດທະນາສະຖາບັນຂອງຕົນເອງ ໂດຍຜ່ານ:

- ການຈັດຕັ້ງກອງທຶນຂະໜາດນ້ອຍ ເພື່ອຮອງຮັບເອົາໂຄງການໃໝ່ໆ ທີ່ກ່ຽວຂ້ອງກັບການ ພັດທະນາ ແລະ ສົ່ງເສີມ.
- ການສົ່ງເສີມໃຫ້ບັນດາອົງການຈັດຕັ້ງທາງສັງຄົມໄດ້ຈົດທະບຽນເປັນສະມາຄົມໃຫ້ຫຼາຍຂຶ້ນ.
- ການໃຫ້ທຶນແກ່ບັນດາອົງການຈັດຕັ້ງທາງສັງຄົມ ເພື່ອຊ່ວຍເຂົາເຈົ້າໃຫ້ສາມາດພັດທະນາ ແລະ ສືບຕໍ່ຈັດຕັ້ງປະຕິບັດແຜນງານຂອງຕົນຕໍ່ໄປໄດ້.

3. **ຂະໜາດຂອງກອງທຶນ: 5,000 - 10,000 USD ຕໍ່ໜຶ່ງໂຄງການ.**
4. **ໄລຍະເວລາຂອງໂຄງການ: 1 ປີ.**
5. **ຂອບເຂດທີ່ຕັ້ງຂອງໂຄງການ:** ສຳລັບ 7 ແຂວງ: ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ເຊກອງ, ໄຊຍະບູລີ, ຊຽງຂວາງ ແລະ ແຂວງວຽງຈັນ.
6. **ຂອບເຂດຂອງວຽກທີ່ຈະໄດ້ຮັບທຶນຊ່ວຍເຫຼືອ:**

6.1 ສຳລັບໂຄງການກ່ຽວກັບ ການພັດທະນາ ແລະ ສົ່ງເສີມ :

- *ການສຶກສາເພື່ອການພັດທະນາແບບຍືນຍົງ,*
- *ກະສິກຳປອດສານພິດ,*
- *ວຽກງານພັດທະນາບົດບາດຍິງ-ຊາຍ ແລະ*
- *ການພັດທະນາໄວໜຸ່ມ.*

6.2 ສຳລັບໂຄງການ ການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ-ສະມາຄົມ ໂດຍຮູບແບບການຝຶກອົບຮົມ ແລະ ການປະຕິບັດຕົວຈິງ.

ໝາຍເຫດ: ກິດຈະກຳ ແລະ ການໃຊ້ຈ່າຍທີ່ບໍ່ສາມາດຕອບສະໜອງໄດ້ມີ:

- **ການຈັດຊື້ຍານພະຫະນະຮັບໃຊ້**
- **ການຈ່າຍເງິນເດືອນ ແລະ ສະຫວັດດີການໃຫ້ແກ່ພະນັກງານ**
- **ການຈ່າຍສຳລັບກິດຈະກຳບັນເທີງຕ່າງໆ**
- **ການສ້າງຜົນປະໂຫຍດໃຫ້ສ່ວນບຸກຄົນພາຍໃນອົງກອນ**
- **ການໂຄສະນາເຜີຍແຜ່ສາສະໜາ**
- **ແລະ ການເຄື່ອນໄຫວທາງການເມືອງ.**

7. **ເງື່ອນໄຂໃນການສະໝັກຂໍທຶນ:**

- ເປັນສະມາຄົມ ຫຼື ອົງການຈັດຕັ້ງທີ່ເຮັດວຽກພັດທະນາທາງສັງຄົມໃນ ສປປ.ລາວ ທີ່ດຳເນີນໂດຍຄົນລາວ, ໄດ້ຂໍອະນຸຍາດການສ້າງຕັ້ງອົງກອນມາແລ້ວ ຫລື ກຳລັງຢູ່ໃນໄລຍະສ້າງຕັ້ງໃໝ່
- ມີສຳນັກງານ, ມີລະບົບການຄຸ້ມຄອງ-ບໍລິຫານການເງິນທີ່ດີ ແລະມີຄວາມພ້ອມດ້ານບຸກຄະລາກອນ.
- ເປັນອົງກອນ ທີ່ຍັງບໍ່ທັນໄດ້ຮັບທຶນການຊ່ວຍເຫຼືອຈາກອົງກອນ Oxfam Novib ໂດຍກົງ
- ເປັນອົງກອນທີ່ຕ້ອງການຮຽນຮູ້ ແລະຕ້ອງການພັດທະນາຢ່າງແທ້ຈິງ.

8. **ການປະກອບເອກະສານເພື່ອຂໍທຶນ:**

ກະລຸນາພົວພັນເອົາແບບຟອມໄດ້ທີ່ ຫ້ອງການສູນອົບຮົມຮ່ວມພັດທະນາ, ບ້ານນາຄຳ, ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ໂທຣ: 21 9130/25 2457. ຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນເຖິງທ້າວ ວັດທະນາ ພັນຄຳ, ຜູ້ປະສານງານ ກອງທຶນຂະໜາດນ້ອຍ E-mail: vatthana@padetc.org ຫລືຈະດາວໂຫລດແບບຟອມໄດ້ທີ່ www.padetc.org.

ໝາຍເຫດ:

**ອົງກອນທີ່ຖືກຄັດເລືອກໃຫ້ເປັນຜູ້ຮັບທຶນຊ່ວຍເຫລືອຈະຕ້ອງໄດ້ຮັບການຝຶກອົບຮົມ ການຂຽນໂຄງການ, ການຄຸ້ມຄອງ-ບໍລິຫານໂຄງການ ແລະ ການຄຸ້ມຄອງ-ບໍລິຫານການເງິນຈາກ ສູນອົບຮົມຮ່ວມພັດທະນາ ເສຍກ່ອນຈຶ່ງສາມາດຮັບທຶນໄປດຳເນີນໂຄງການໄດ້.**

**ສູນອົບຮົມຮ່ວມພັດທະນາ**